ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ສໍານັກງານຂໍ້ມູນຕ້ານການຟອກເງິນ

ເລກທີ: 798 /ສຕຟງ

ນະຄອນຫຼວງວຽງຈັນ, ວັນທີ 12 AUG 2016

# ແຈ້ງການ

**ເຖິງ**: ທ່ານ ຜູ້ອໍານວຍການ ທະນາຄານທຸລະກິດ ແລະ ຜູ້ຈັດການສາຂາທະນາຄານທຸລະກິດຕ່າງປະເທດ, ສະຖາບັນການເງິນຈຸລະພາກ, ໂຮງຊວດຈໍາ, ບໍລິສັດໃຫ້ກູ້ຢືມ ແລະ ໃຫ້ສິນເຊື່ອທຸກປະເພດ, ບໍລິສັດເຊົ່າສິນເຊື່ອ, ບໍລິສັດຮັບບໍລິການໂອນເງິນ, ຮ້ານແລກປ່ຽນເງິນຕາ ແລະ ບໍລິສັດປະກັນໄພ.

ທີ່ນັບຖື.

**ເລື່ອງ**: ການຈັດຕັ້ງປະຕິບັດບັນດານິຕິກໍາກ່ຽວກັບວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ໄດ້ຮັບຮອງ.

- ອີງຕາມກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 50/ສພຊ, ລົງວັນທີ 21 ກໍລະກົດ 2014.

ສໍານັກງານຂໍ້ມູນຕ້ານການຟອກເງິນ (ສຕຟງ) ຂໍແຈ້ງມາຍັງບັນດາທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ, ສະຖາບັນການເງິນຈຸລະພາກ, ໂຮງຊວດຈໍາ, ບໍລິສັດໃຫ້ກູ້ຢືມ ແລະ ໃຫ້ສິນເຊື່ອທຸກປະເພດ, ບໍລິສັດເຊົ່າສິນເຊື່ອ, ບໍລິສັດຮັບບໍລິການໂອນເງິນ, ຮ້ານແລກປ່ຽນເງິນຕາ ແລະ ບໍລິສັດປະກັນໄພ ໃນຂອບເຂດທົ່ວປະເທດ ໃຫ້ເອົາໃຈໃສ່ຈັດຕັ້ງປະຕິບັດບັນດານິຕິກໍາກ່ຽວກັບວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ໄດ້ຮັບຮອງນັບແຕ່ປີ 2014 ເປັນຕົ້ນມາ ດັ່ງລາຍລະອຽດລຸ່ມນີ້:

1) ກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 50/ສພຊ, ລົງວັນທີ 21 ກໍລະກົດ 2014;
2) ດໍາລັດວ່າດ້ວຍການກັກ, ການຍຶດ ແລະ ການອາຍັດ ທຶນທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບປັບປຸງ ສະບັບເລກທີ 03/ນຍ, ລົງວັນທີ 11 ກຸມພາ 2016;
3) ຄໍາສັ່ງຂອງປະທານຄະນະກໍາມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ວ່າດ້ວຍການເພີ່ມທະວີຕິດຕາມກວດກາບັນຊີມີລະນາມ ສະບັບເລກທີ 05/ຄຕຟງ, ລົງວັນທີ 19 ພຶດສະພາ 2015;

4) ຂໍ້ຕົກລົງວ່າດ້ວຍ ການລາຍງານທຸລະກຳເງິນສົດ ທີ່ມີມູນຄ່າເກີນກຳນົດ ສະບັບເລກທີ 417/ຄຕຟງ, ລົງວັນທີ 15 ມິຖຸນາ 2015;

5) ຂໍ້ຕົກລົງວ່າດ້ວຍ ການລາຍງານທຸລະກຳທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 13/ຄຕຟງ, ລົງວັນທີ 19 ຕຸລາ 2015;

6) ຂໍ້ຕົກລົງວ່າດ້ວຍ ທຸລະກຳໂອນເງິນ ທີ່ມີມູນຄ່າເກີນກຳນົດ ສະບັບເລກທີ 963/ທຫລ, ລົງວັນທີ 27 ພະຈິກ 2015;

7) ຂໍ້ຕົກລົງວ່າດ້ວຍ ການຊອກຮູ້ລູກຄ້າ ແລະ ການເພີ່ມທະວີການເອົາໃຈໃສ່ລູກຄ້າ ສະບັບເລກທີ 01/ຄຕຟງ, ລົງວັນທີ 15 ມັງກອນ 2016;

8) ຂໍ້ຕົກລົງວ່າດ້ວຍ ມາດຕະການທາງບໍລິຫານ ຕໍ່ຜູ້ລະເມີດລະບຽບກົດໝາຍໃນຂົງເຂດວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 09/ຄຕຟງ, ລົງວັນທີ 30 ມີນາ 2016;

9) ຄຳແນະນຳວ່າດ້ວຍ ການນຳໃຊ້ມາດຕະການຊົ່ວຄາວຕໍ່ຊັບສິນທີ່ພົວພັນກັບການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 08/ຄຕຟງ, ລົງວັນທີ 30 ມີນາ 2016;

10) ຄຳແນະນຳວ່າດ້ວຍ ຕົວຊີ້ບອກ ຂອງທຸລະກຳທີ່ໜ້າສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 41/ໜຕຟງ, ລົງວັນທີ 12 ມັງກອນ 2016;

11) ຄຳແນະນຳວ່າດ້ວຍ ການລາຍງານທຸລະກຳທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 42/ໜຕຟງ, ລົງວັນທີ 12 ມັງກອນ 2016.

**(ລາຍລະອຽດສາມາດເຂົ້າໄປເບິ່ງໄດ້ທີ່ເວບໄຊທ໌ຂອງ ສຕຟງ "www.amlio.gov.la").**

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອເພີ່ມທະວີຄວາມເອົາໃຈໃສ່ຕາມເນື້ອໃນຈິດໃຈຂ້າງເທິງນີ້ດ້ວຍ.

ເຊັນແທນ. **ຮັກສາການຫົວໜ້າສຳນັກງານຂໍ້ມູນຕ້ານການຟອກເງິນ.**

ຈິນດາໄມ ວິໄລທົງສ໌

- ສອບຖາມຂໍ້ມູນເພີ່ມຕື່ມໄດ້ທີ່: ສຳນັກງານຂໍ້ມູນຕ້ານການຟອກເງິນ ໂທ 021 264624 ຫຼື ແຟັກ 021 265320.